# ຫົວຂໍ້:

# ພັດທະນາການສອນໄວຍາກອນພາສາອັງກິດໂດຍການສອນແບບທີມແຂ່ງຂັນ Team Game Tournament (TGT) ສໍາລັບນັກສຶກສາສາຍພາສາອັງກິດປີທີ 2 ລະບົບ 12+4 ທີ່ ວິທະຍາໄລຄູບ້ານເກີນ

# THE DEVELOPMENT OFTEACHING ENGLISH GRAMMAR BY USING TEAM GAME TOURNAMENT (TGT) FOR THE SECOND YEAR ENGLISH TEACHER STUDENTS, AT BANKEUN TEACHER TRAINING COLLEGE


**ຜູ້ວິໄຈ:** ທ່ານ ຊອ. ປຕ. ນາງ ພູວຽງ ໂສລັດຕະນະວົງ

**ເພື່ອນຮ່ວມວິໄຈ:** ທ່ານ ປທ. ຄໍາແພງ ລາດຊະວົງ

ທ່ານ ຊອ. ປຕ. ບຸນທັນ ດີອັນນາ

ທ່ານ ປທ. ສົມບູນ ດາລາວົງ

ທ່ານ ປທ. ນາງ ສຸດສາຄອນ ພົມພັກດີ

**ທີ່ປຶກສາ:** ທ່ານ ອຈ. ປທ. ແປງໃຈ ແສງຈັນທະວົງ

**ວິທະຍາໄລຄູບ້ານເກີນ**



**ສົກຮຽນ 2019 - 2020**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ວິທະຍາໄລຄູບ້ານເກີນ

ເລກທີ ..703../ວຄກ

ວັນທີ 13 ສິງຫາ 2020

# ໃບຮັບຮອງຜົນງານ

ຜູ້ອຳນວຍການວິທະຍາໄລຄູບ້ານເກີນໄດ້ຮັບຮອງຜົນງານການຂຽນທາງວິຊາການຫົວຂໍ້:

**ການພັດທະນາການສອນໄວຍາກອນພາສາອັງກິດໂດຍການສອນ ແບບທີມແຂ່ງຂັນ Team Game Tournament (TGT) ສຳລັບນັກສຶກສາ ສາຍພາສາອັງກິດປີ 2 ລະບົບ 12+4 ທີ່ວິທະຍາໄລຄູບ້ານເກີນ**

**ຜູ້ວິໄຈ:** **ທ່ານ ຊອ. ປຕ. ນາງ ພູວຽງ ໂຮລັດຕະນະວົງ**

**ເພື່ອນຮ່ວມວິໄຈ:** ທ່ານ ປທ. ຄຳແພງ ລາດຊະວົງ

ທ່ານ ຊອ. ປຕ. ບຸນທັນ ດີວັນນາ

ທ່ານ ປທ. ສົມບູນ ດາລາວົງ

ທ່ານ ປທ. ນາງ ສຸດສາຄອນ ພົມພັກດີ

**ທີ່ປຶກສາ :** ທ່ານ ອຈ. ປທ. ແປງໃຈ ແສງຈັນທະວົງ

ໄດ້ຮັບຮອງຈາກປະທານ ແລະ ຄະນະກຳມະການສະພາວິທະຍາສາດ ຄັ້ງວັນທີ 13 ສິງຫາ 2020 ທີ່ວິທະຍາໄລຄູບ້ານເກີນ.

ດັ່ງນັ້ນ ຜູ້ອຳນວຍການວິທະຍາໄລຄູບ້ານເກີນຈຶ່ງໄດ້ອອກໃບຮັບຮອງສະບັບນີ້ໃຫ້ແກ່ຜູ້ຂຽນ ແລະ ປະກາດໃຊ້ເປັນປະໂຫຍດເປັນທາງການ.

ຜູ້ອຳນວຍການ

ວິທະຍາໄລ ຄູບ້ານເກີນ

ຈັນທະມາລາ ສຸທຳມະວົງ

ປະທານ ແລະ ຄະນະກຳມະການກວດສອບເນື້ອໃນ ແລະ ຮັບຮອງຜົນງານການຂຽນທາງວິຊາການ ຫົວຂໍ້:

**ການພັດທະນາການສອນໄວຍາກອນພາສາອັງກິດໂດຍການສອນ**
**ແບບທີມແຂ່ງຂັນ Team Game Tournament (TGT) ສຳລັບນັກສຶກສາ**
**ສາຍພາສາອັງກິດປີ 2 ລະບົບ 12+4 ທີ່ວິທະຍາໄລຄູບ້ານເກີນ**

ຄັ້ງວັນທີ 13 ສິງຫາ 2020, ເປັນຜົນງານທີ່ສຳຄັນຕໍ່ການສຶກສາໃນວິທະຍາໄລຄູບ້ານເກີນ.

<u>ປະທານຄະນະກຳມະການ</u>

ທ່ານ ປອ. ບົວຄ່ອງ ແກ້ວອາສາ ........................................

<u>ຄະນະກຳມະການ</u>

ທ່ານ ປທ. ຈິດຕະຈອນ ວົງໄຊ ........................................

ທ່ານ ປຕ. ນາງ ສີນອນ ແກ້ວບຸນມາ ........................................

ທ່ານ ປທ. ຄຳສິງ ຄຳທະວີ ........................................

ວິທະຍາໄລຄູບ້ານເກີນ

## ບົດຄັດຫຍໍ້

ຜ່ານການຮຽນ-ການສອນວິຊາ General English 3 ປີ 2 ສົກຮຽນ 2019-2020 ເຫັນວ່ານັກຮຽນອ່ອນ ແລະ ນັກຮຽນປານກາງບາງຈຳນວນແມ່ນບໍ່ມີສ່ວນຮ່ວມໃນການເຮັດກິດຈະ ກຳຕອບຄຳຖາມເອົາຄະແນນ ແລະ ບໍ່ກ້າສະແດງອອກຍ້ອນຂາດຄວາມໝັ້ນໃຈ ແລະ ກຳເນື້ອໃນບົດຮຽນບໍ່ໄດ້. ເວລາຈັດກຸ່ມຜ່ານມາແມ່ນນັກຮຽນອ່ອນ ແລະ ປານກາງມີຄວາມເອື່ອຍອີງຄົນເກັ່ງ.   ຜູ້ວິໄຈຈຶ່ງເຮັດບົດຄົ້ນຄ້ວາວິໄຈໃນຫົວຂໍ້ ພັດທະນາການສອນໄວຍາກອນພາສາອັງກິດໂດຍການສອນແບບທີມແຂ່ງຂັນ Team Game Tournament (TGT) ສຳລັບນັກສຶກສາສາຍພາສາອັງກິດປີທີ 2 ລະບົບ 12+4 ທີ ວິທະຍາໄລຄູບ້ານເກີນ. ການວິໄຈຄັ້ງນີ້ມີຈຸດປະສົງ 3 ດ້ານຄື: 1. ເພື່ອສຶກສາປະສິດທິພາບຂອງບົດສອນໄວຍາກອນພາສາອັງກິດໂດຍການສອນແບບທີມແຂ່ງຂັນ (TGT) ໂດຍຜ່ານເກນ 80/80. 2, ເພື່ອສຶກສາປະສິດທິຜົນຂອງການຮຽນຮູ້ໄວຍາກອນພາສາອັງກິດໂດຍການສອນ ແບບທີມແຂ່ງຂັນ (TGT) ແລະ 3, ເພື່ອສຶກສາຄວາມເພິ່ງພໍໃຈ ຕໍ່ການຈັດການຮຽນ-ການສອນໄວຍາກອນພາສາອັງກິດໂດຍການສອນແບບທີມແຂ່ງຂັນ (TGT).

ກຸ່ມຕົວຢ່າງໃນການວິໄຈຄັ້ງນີ້ແມ່ນນັກສຶກສາສາຍພາສາອັງກິດປີ 2 ລະບົບ 12+4 ທີ່ວິຍາໄລຄູບ້ານເກີນຈຳນວນ 1 ຫ້ອງ 25 ຄົນ, ຍິງ 18 ຄົນ ໃນສົກຮຽນ 2019-2020 ເຊິ່ງແມ່ນເລືອກເອົາແບບເຈາະໂຈງ.

ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ປະກອບມີ ບົດສອນຈຳນວນ 3 ບົດ,  ແບບທົດສອບວັດຜົນສຳເລັດທາງການຮຽນແບບປາລະໄນມີ 4 ຕົວເລືອກ ຈຳນວນ 20 ຂໍ້ ແລະ ແບບສອບຖາມຄວາມເພິ່ງພໍໃຈ ຊະນິດປະເມີນຄ່າ 5 ລະດັບ ຈຳນວນ 20 ຂໍ້, ສະຖິຕິໃຊ້ວິເຄາະຂໍ້ມູນຄື: ເປີເຊັນ, ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ.

ຜົນການຄົ້ນຄ້ວາພົບວ່າ:

1. ປະສິດທິພາບຂອງບົດສອນທີ່ໄດ້ຈາກການຈັດການຮຽນການສອນໄວຍາກອນພາສາອັງກິດໂດຍໃຊ້ເຕັກນິກການສອນແບບທີມແຂ່ງຂັນ TGT ພົບວ່າມີປະສິດທິພາບເທົ່າກັບ 88.93 /95.20 ສູງກວ່າເກນ 80/80.
2. ປະສິດທິຜົນຂອງການຮຽນທີ່ໄດ້ຈາກການຈັດການຮຽນການສອນໄວຍາກອນພາສາອັງກິດໂດຍໃຊ້ເຕັກນິກການສອນແບບທີມແຂ່ງຂັນ TGT ພົບວ່າມີປະສິດທິຜົນຂອງການວິເຄາະດັດຊະນີປະສິດທິຜົນ (E.I) ມີຄວາມກ້າວໜ້າທາງດ້ານພັດທະນາການ ການຮຽນຮູ້ຂອງນັກຮຽນມີຄ່າເທົ່າກັບ 0.95 ສະແດງວ່າ ນັກຮຽນມີຄວາມຮູ້ເພີ່ມຂຶ້ນ ສູງກວ່າເກນທີ່ກຳນົດໄວ້ 0.5.
3. ຜົນການວິເຄາະຄວາມເພິ່ງພໍໃຈ ຂອງນັກຮຽນທີ່ມີຕໍ່ການຮຽນ ການສອນໄວຍາກອນພາສາອັງກິດໂດຍໃຊ້ເຕັກນິກການສອນແບບທີມແຂ່ງຂັນ TGT ໂດຍລວມເຫັນວ່າຢູ່ໃນລະດັບຄວາມເພິງພໍໃຈຫຼາຍມີຄ່າສະເລ່ຍທັງໝົດເທົ່າກັບ 4.62  ແລະ ຄ່າຜັນປ່ຽນມາດເທົ່າກັບ 0.57

## Abstract

When I have been taught General English 3, year 2, in acadimic year 2019-2020, I found that some weak and midle students did not pay attention in participating acitivities to get the marks. Some of them lack of confidence and could not cover all lesson. When doing group activity, only good students were the leaders. Therefore, it inspired me to do research on he topic of "The Development of teaching English Grammar By Using Team Game Tournament (TGT) For The Second Year English Teacher Students, At Bankeun Teacher Training College".

This research covered three objectives; 1. To find out the effecciency of the lesson plan by using Team Game Tournament (TGT) based on criteria of 80/80 . 2. To find out the effective outcomes of the students' learning by using Team Game Tournament (TGT) and 3. To find out the satisfaction from students who learnt English grammar by using Team Game Tournament (TGT).

There were 25 target students with 18 females in year 2, academic year 2019-2020 at Bankeun Teacher Training College and the sample group is chosen under purposive sampling.

In this research, it used three tools such as three lesson plans, pre and post-test and satisfaction questionnaires.

The result of this research revealed that: 1) the effecciency of the lesson plan by using Team Game Tournament (TGT) equaled 88.93 /95.20. 2) The effective outcomes of the students' learning by using Team Game Tournament (TGT) equaled 0.95. And 3) The satisfaction from students who learnt English grammar by using Team Game Tournament (TGT) is very high which $\bar{x}$= 4.62 and S.D.= 0.57.